**34. ຖ້າຊື້ຮຸ້ນໃນລາຄາແພງ ແລ້ວລາຄາຫຼຸດລົງຈະເຮັດແນວໃດ?**

ຕ້ອງເຂົ້າໃຈນຳກັນວ່າ ທຸກໆການລົງທຶນລ້ວນມີຄວາມສ່ຽງ. ການລົງທຶນໃນຮຸ້ນກໍ່ມີຄວາມສ່ຽງເຊັ່ນກັນ, ລາຄາຮຸ້ນກໍ່ມີການປ່ຽນແປງຢູ່ຕະຫຼອດເວລາ ມີຂຶ້ນມີລົງ. ສະນັ້ນ ກ່ອນຕັດສິນໃຈລົງທຶນ ທ່ານຕ້ອງວິເຄາະໃຫ້ຖີ່ຖ້ວນ. ຖ້າທ່ານບໍ່ມີຄວາມຊຳນານດ້ານການຊື້-ຂາຍຮຸ້ນ ກໍຄວນປຶກສາກັບບໍລິສັດຫຼັກຊັບ (ຜູ້ເຮັດໜ້າທີ່ໃຫ້ຄຳປຶກສາແກ່ຜູ້ລົງທຶນ).

ກໍລະນີ ທ່ານໄດ້ຊື້ຮຸ້ນໃນລາຄາແພງ ແລະ ຫຼັງຈາກນັ້ນລາຄາຕ່ຳລົງ ທ່ານອາດພິຈາລະນາ ດັ່ງນີ້:

- **ຖ້າທ່ານເປັນຜູ້ລົງທຶນແບບບໍ່ມັກຄວາມສ່ຽງ** ສະແດງວ່າ ທ່ານເປັນຜູ້ລົງທຶນທີ່ຍອມຮັບຄວາມສ່ຽງໄດ້ຂ້ອນຂ້າງຕ່ຳ (ບໍ່ມັກຄວາມສ່ຽງ) ແລະ ໃຫ້ຄວາມສຳຄັນກັບຕົ້ນທຶນຫຼາຍກວ່າຜົນຕອບແທນ. ທ່ານອາດຂາຍອອກ ເພື່ອຢຸດການຂາດທຶນ ຫາກທ່ານຄິດວ່າລາຄາຮຸ້ນຍັງຈະຫຼຸດລົງໄປອີກ;
- **ຖ້າທ່ານເປັນຜູ້ລົງທຶນແບບມັກຄວາມສ່ຽງ** (ເປັນຜູ້ລົງທຶນທີ່ມັກຊື້-ຂາຍເພື່ອເກງກຳໄລຈາກສ່ວນຕ່າງຂອງລາຄາຮຸ້ນ) ສະແດງວ່າ ທ່ານເປັນຜູ້ລົງທຶນທີ່ມີຄວາມເຊື່ອໝັ້ນໃນຕົວເອງສູງ, ກ້າໄດ້ກ້າເສັຍ ແລະ ຮັບຄວາມສ່ຽງໄດ້ສູງ. ທ່ານອາດຈະພິຈາລະນາຖືຄອງຮຸ້ນດັ່ງກ່າວໄວ້ ຫຼື ເຂົ້າໄປຊື້ຮຸ້ນດັ່ງກ່າວຕື່ມອີກ ຖ້າຫາກທ່ານຄິດວ່າຮຸ້ນນັ້ນຈະມີລາຄາເພີ່ມສູງຂຶ້ນ ເພື່ອຂາຍເອົາກຳໄລຈາກສ່ວນຕ່າງຂອງລາຄາທີ່ຈະເພີ່ມຂຶ້ນໃນຕໍ່ໜ້າ.